# ບົດທີ 8
# ການນຳໃຊ້ແບບທົດສອບໃນຫ້ອງຮຽນ

## 8.1 ການນຳໃຊ້ Quizizz ໃນຫ້ອງຮຽນ

ເມື່ອສຳເລັດການສ້າງແບບທົດສອບດ້ວຍ Quizizz ແລ້ວ ອັນດັບຕໍ່ໄປແມ່ນເຮົາຈະນຳໄປໃຊ້ກັບຜູ້ຮຽນ ເຊິ່ງມີຂັ້ນຕອນຂະບວນການດັ່ງຕໍ່ໄປນີ້:

### 8.1.1 ສຳລັບຜູ້ສອນ

(1) ເຂົ້າຫາເວັບໄຊ Quizizz

(2) ຄຼິກທີ່ My library ເພື່ອເຂົ້າໄປຫາຂໍ້ມູນທັງໝົດທີ່ສ້າງໄວ້






(3) ເລືອກແບບທົດສອບທີ່ຕ້ອງການທົດສອບຄວາມຮູ້ຂອງຜູ້ຮຽນ

(4) ຖ້າຕ້ອງການທົດສອບໃນເວລາປັດຈຸບັນໃຫ້ຄຼິກທີ່ Start a live quiz

(5) ຖ້າຕ້ອງການມອບເປັນວຽກບ້ານ ແລະ ຕອບຕາມເວລາທີ່ກຳນົດ ໃຫ້ຄຼິກທີ່ Assign homework






(6) ຄຼິກທີ່ Start a live quiz ເພື່ອທົດສອບຄວາມຮູ້ຜູ້ຮຽນໃນເວລາປັດຈຸບັນ

(7) ຄຼິກເລືອກໃນຮູບແບບ Classic

(8) ຄຼິກ Continue ເກມແຂ່ງຂັນກໍ່ຈະເລີ່ມຂຶ້ນ ໂດຍຕ້ອງສົ່ງລະຫັດໃຫ້ຜູ້ຮຽນເຂົ້າຮ່ວມການທົດສອບ

(9) ຜູ້ສອນຈະຕ້ອງສົ່ງເສັ້ນທາງ ແລະ ລະຫັດໃຫ້ຜູ້ຮຽນ










### 8.1.2 ສຳລັບຜູ້ຮຽນ

(1) ຜູ້ຮຽນຈະຕ້ອງພິມທີ່ຢູ່ເພື່ອເຂົ້າໄປທົດສອບຄວາມຮູ້ໂດຍພິມ joinmyquiz.com ເຂົ້າໄປຜ່ານມືຖື ຫຼື ຄອມພິວເຕີກໍ່ໄດ້

(2) ຜູ້ຮຽນພິມລະຫັດ ແລະ ຊື່ຂອງຜູ້ຮຽນເຂົ້າໄປ

(3) ຄຼິກເລືອກ Join ເພື່ອລໍຖ້າຜູ້ສອນສັ່ງການເລີ່ມຕົ້ນທົດສອບ







(4) ເມື່ອຜູ້ຮຽນເຂົ້າຄົບຕາມຈຳນວນແລ້ວຜູ້ສອນຄຼິກປຸ່ມ Start ເພື່ອເລີ່ມການແຂ່ງຂັນ ຫຼື ທົດສອບຄວາມຮູ້ , ຫຼັງຈາກຜູ້ຮຽນຕອບແບບສອບຖາມສຳເລັດທຸກຄົນແລ້ວຈະປາກົດໜ້າຕ່າງຜູ້ທີ່ໄດ້ຊະນະໃນເກມການແຂ່ງຂັນ ແລະ ຜູ້ຮຽນຈະໄດ້ຮັບຮູ້ຄະແນນການທົດສອບຂອງຕົນເອງທັນທີ.




### 8.1.3 ການເຂົ້າເບິ່ງຄະແນນຜົນການທົດສອບ

1) ຜູ້ສອນຈະຕ້ອງເຂົ້າໄປຫາເວັບໄຊ Quizizz ຈາກນັ້ນຄຼິກທີ່ Reports ເພື່ອເບິ່ງຜົນການທົດສອບ

2) ເລືອກຊື່ແບບທົດສອບທີ່ຕ້ອງການເບິ່ງຜົນການທົດສອບ

3) ສະແດງຜົນຄະແນນວ່າຜູ້ຮຽນຕອບຖືກ, ຕອບຜິດຈັກຂໍ້

4) ສາມາດເລືອກຮູບແບບສະແດງຜົນການທົດສອບໄດ້ຫຼາຍແບບ

5) ສາມາດດາວໂຫຼດ ຫຼື ສັ່ງພິມຜົນການທົດສອບອອກຈາກເຄື່ອງພິມໄດ້.




## 8.2 ການນຳໃຊ້ບົດສອນຜ່ານ Quizizz

### 8.2.1 ສຳລັບຜູ້ສອນ

1) ຜູ້ສອນຈະຕ້ອງເຂົ້າໄປຫາເວັບໄຊ Quizizz

2) ຄລິກທີ່ My Library ເພື່ອເຂົ້າໄປເບິ່ງບົດທົດສອບ ຫຼື ບົດຮຽນທີ່ເຮົາໄດ້ສ້າງໄວ້ທັງໝົດ

3) ເລືອກບົດຮຽນ ຫຼື ບົດທົດສອບທີ່ເຮົາຕ້ອງການຈະໄປໃຊ້ກັບນັກສຶກສາ












4) ຖ້າເຫັນຄຳສັ່ງ Finish Editing ຕ້ອງຄຼິກເຂົ້າໄປເພື່ອບັນທຶກກ່ອນຈຶ່ງຈະສາມາດນຳສະເໜີບົດຮຽນນັ້ນໄດ້

5) ຄຼິກທີ່ Save ເພື່ອບັນທຶກຂໍ້ມູນທັງໝົດທີ່ເຮົາໄດ້ແກ້ໄຂໄວ້




6) ຖ້າຕ້ອງການນຳສະເໜີບົດຮຽນໃນເວລາປັດຈຸບັນໃຫ້ຄຼິກທີ່ Start a live lesson

7) ຖ້າຕ້ອງການມອບໝາຍໃຫ້ຜູ້ຮຽນໄປຮຽນເອງ ຫຼື ມອບໝາຍວຽກບ້ານໃຫ້ຜູ້ຮຽນໃຫ້ຄຼິກທີ່ Assign homework

8) ຖ້າຕ້ອງການແຊເສັ້ນທາງໃຫ້ຜູ້ຮຽນຄຼິກທີ່ Share

9) ຖ້າຕ້ອງການໄຂບົດຮຽນນີ້ໃຫ້ຄຼິກທີ່ Edit

10) ຖ້າຕ້ອງການພິມບົດຮຽນອອກຈາກເຄື່ອງພິມໃຫ້ຄຼິກທີ່ Print

11) ສຳເນົາ ຫຼື Copy ບົດຮຽນ

12) ຖ້າຕ້ອງການລຶບບົດຮຽນນີ້ຖິ້ມໃຫ້ຄຼິກທີ່ Delete

13) ແມ່ນບັນທຶກຂໍ້ມູນບົດຮຽນທີ່ມີການແກ້ໄຂຕ່າງໆ




14) ແຕ່ຂັ້ນຕອນຕໍ່ໄປນີ້ຂໍເລືອກໃນຮູບແບບທີ່ (6) Start a live lesson ເພາະຕ້ອງການຈັດການຮຽນການສອນໃນຮູບແບບປັດຈຸບັນ

15) ຄຼິກເລືອກ Present ເພື່ອເຂົ້າສູ່ການນຳສະເໜີບົດຮຽນ

16) ສົ່ງລະຫັດໃຫ້ຜູ້ຮຽນເຂົ້າຫາບົດຮຽນທີ່ກຽມຈະສອນໃນປັດຈຸບັນ

17) ຫຼື ສົ່ງລິ້ງໃຫ້ຜູ້ຮຽນເຂົ້າຫາບົດຮຽນທີ່ກຽມຈະສອນ







18) ເມື່ອຜູ້ຮຽນເຂົ້າໄດ້ສຳເລັດທຸກຄົນແລ້ວ ຜູ້ສອນກໍ່ຄຼິກທີ່ປຸ່ມ Start ເພື່ອເລີ່ມການສອນ

### 8.2.1 ສໍາລັບຜູ້ຮຽນ

ເມື່ອຜູ້ຮຽນໄດ້ຮັບລິ້ງການເຂົ້າຫາບົດຮຽນ ຫຼື ການຮຽນ-ການສອນໂດຍນໍາໃຊ້ Lesson ແລ້ວ ຜູ້ຮຽນຈະຕ້ອງເຂົ້າຕາມເສັ້ນທາງດັ່ງຕໍ່ໄປນີ້:

1) ກໍລະນີໄດ້ລະຫັດມາແລ້ວເຂົ້າຜ່ານທາງມືຖື ໃຫ້ພິມຄົ້ນຫາ Joinmyquizizz

2) ເລືອກ For students – Quizizz

3) ລໍຖ້າ







4) ເບິ່ງລະຫັດທີ່ຜູ້ສອນສົ່ງໃຫ້ (ລະຫັດຈະມີການປ່ຽນແປງຕະຫຼອດເວລາທີ່ມີການເປີດນໍາໃຊ້ບົດຮຽນທຸກຄັ້ງ)




5) ຜູ້ຮຽນປ້ອນລະຫັດເຂົ້າຫາການຮຽນ

6) ແລ້ວກົດເຂົ້າຮ່ວມການຮຽນ

7) ປ້ອນຊື່ຂອງຜູ້ຮຽນ







**- ສຳລັບຜູ້ສອນ**

8) ຈະສັງເກດເຫັນວ່າມີຜູ້ຮຽນເຂົ້າມາແລ້ວ

9) ຜູ້ສອນກໍ່ກົດປຸ່ມ Start ເພື່ອເລີ່ມການສອນ




**- ສຳລັບຜູ້ຮຽນ**

10) ຜູ້ຮຽນກໍ່ຈະເຫັນໜ້າຕາບົດຮຽນຕາມຜູ້ສອນໄດ້ນຳສະເໜີໄປ

11) ແຕ່ຖ້າຮອດໜ້າ Slide ທີ່ມີການທົດສອບການຕິດຕາມຂອງຜູ້ຮຽນ ຜູ້ຮຽນກໍ່ຈະຕ້ອງໄດ້ຕອບແບບສອບຖາມຕາມໄລຍະເວລາທີ່ຜູ້ສອນກຳນົດໃຫ້

12) ຖ້າຜູ້ຮຽນຕອບຖືກກໍ່ຈະແຈ້ງຜົນໃຫ້ຮູ້ທັນທີ










13) ສາລັບຜູ້ສອນກໍ່ຈະຮັບຮູ້ໄດ້ທັນທີວ່າຜູ້ຮຽນຕອບຖືກ, ຜິດ ໜ້ອຍຫຼາຍຊ່ຳໃດ ກອນຈັກເປີເຊັນ



14) ຖ້າເປັນຄາຖາມປາຍເປີດຜູ້ຮຽນກໍ່ຈະຕ້ອງລະດົມສະໜອງຕອບແບບສອບຖາມດັ່ງກ່າວ

15) ສໍາລັບຜູ້ສອນຈະເຫັນຜູ້ຮຽນແບບແບບສອບຖາມປາຍເປີດໃນຮູບແບບນີ້

16) ເມື່ອສໍາເລັດການຮຽນຜູ້ຮຽນກໍ່ຈະເຫັນຜົນການຮຽນໃນບົດນັ້ນ










17) ນອກນີ້ຜູ້ສອນຍັງສາມາດເບິ່ງຜົນການຮຽນຂອງຜູ້ຮຽນທັງໝົດໄດ້ໂດຍຄຼິກທີ່ View Reports




18) ແລະ ສາມາດດາວໂຫຼດ ຫຼື ສັ່ງພິມບົດສະຫຼຸບັນທຶດສອບດັ່ງກ່າວໄປໃຊ້ງານໄດ້ອີກ



# ເອກະສານອ້າງອີງ


https://blogs.umass.edu/onlinetools/assessment-centered-tools/quizizz/
https://www.slideshare.net/deepakcheenath/quizizz-presentation

http://human.skru.ac.th/file/Quizizz164.pdf

https://www.starfishlabz.com/blog/62-quizizz-free-quizzes-for-every-student